http://fr.groups.yahoo.com/group/laos-solidarite/message/11879

*De :* "Phoui" <phoui@...>
*Date :* Lundi 14, Novembre 2005  13:14
*Objet :* The Invitation of HRH Prince Anouvong Sethathirath IV

ສະບາຍດີ ກູ່ແຍງ ສິງ ແລະ ທ່ານຜູ້ອ່ານ,

ຄັນເຈົ້າໄດ້ຖາມມາແລ້ວກ່ຽວກັບເຣື່ອງ ໝໍ ບິ່ນ ລ່າດິນ ໄປຢູ່ເມືອງລາວນັ້ນ, ຕາມ
ຄວາມເຂົ້າໃຈ ຂອງຂ້ອຍເປັນດັ່ງນີ້ :

ຫລັງຈາກທີ່ທະຫານອະເມຣິກັນໄດ້ບຸກເຂົ້າຕີປະເທດອັຽຣັກແລ້ວ, ໝໍ ແບ່ນລ່າແດນ
ຈຳຕ້ອງໄດ້ໜີອອກໄປລີ້ພັຍຢູ່ຕ່າງປະເທດ, ເນື່ອງຈາກວ່າ ໝູ່ປະເທດອາຣັບ ຢູ່ເຂດ
ຕະວັນອອກກາງ ບໍ່ມີໃຜຮັບເອົາຜູ້ກ່ຽວ ເພາະຢ້ານວ່າຝ່າຍອະເມຣິກາເສັຽໃຈ. ໝໍ
ແບ່ນລ່າແດນ ເລີຍຄຶດວ່າ ໄປຂໍລີ້ພັຍຢູ່ເມືອງລາວພູ້ນ, ຄັນວ່າ ຈະເອົາເຮືອບິນ ໄປລົງ
ເດີ່ນຍົນ ວັດໄຕ, ໝໍບາດຢ້ານວ່າ ຕຳຣວດຊາຍແດນເດີ່ນຍົນຈັບເອົາ, ເລີຍເຂົ້າປະເທດ
ທາງ ຂົວມິຕພາບ ບ້ານທ່ານະແລ້ງ, ເມື່ອ ໝໍ ແບ່ນລະແດ່ນ ຜ່ານຂົວແລ້ວ ເຂົ້າໄປຫາ
ປ້ອມຕຳຣວດກວດຄົນເຂົ້າເມືອງ, ຕຳຣວດ ກວດເບິ່ງໜັງສືຜ່ານແດນຕັ້ງດົນ ແລະ
ຫລຽວເບິ່ງ ໜ້າໝໍ ແບ່ນລະແດ່ນ ແລະ ຖາມວ່າ : ຊື່ເຈົ້າວ່າຈັ່ງໃດ ? ເພື່ອບໍ່ໃຫ້ຄົນ
ສົງໃສວ່າ ໂຕແມ່ນໃຜ ແລະ ຢາກເວົ້າເປັນ ພາສາລາວແດ່, ໝໍເລີຍຕອບວ່າ :
ແບ້ນລາກດິນ, ຕຳຣວດບໍ່ເຂົ້າໃຈເລີຍຖາມອີກວ່າ : ຊື່ເຈົ້າເອີ້ນວ່າຈັ່ງໃດກໍ໊ ?
ແບ້ນລາກດິນ, ຕຳຣວດໄດ້ຍິນຄັກຍິນແໜ່ແລ້ວເຂົ້າໃຈວ່າ ໝໍນີ້ທ້າທາຍ ເລີຍເກີດ
ຄວາມໃຈຮ້າຍຂຶ້ນມາ ແລ້ວໄລ່ ໝໍ ແບ່ນລ່າແດ່ນ ຂ້າມຂົວຄືນໄປບໍ່ໃຫ້ ຜູ້ກ່ຽວເຂົ້າເມືອງ.

ຫລັງຈາກເຣື່ອງນີ້ໄດ້ເກີດຂຶ້ນມາແລ້ວ, ຝ່າຍອະເມຣິກາກໍດີໃຈວ່າ ລາວໄດ້ຮ່ວມມື ໃນ
ການຫ້າມບໍ່ໃຫ້ ໝໍ ແບ່ນລ່າແດ່ນ ເຂົ້າໄປລີ້ພັຍໃນລາວ ເລີຍອຳນວຍຄວາມສດວກ
ອະນຸຍາດ NTR ໃຫ້ແກ່ລາວ.

ຮັກແພງ

ຜຸຍ

ຂໍອາພັຍນຳຜູ້ອ່ານ ທີ່ໄດ້ໃຊ້ຄວາມບໍ່ສຸພາບເຂົ້າປະກອບໃນເຣື່ອງຊວນຫົວຂ້າງເທິງນີ້.
ຂໍຂອບໃຈ.